**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ ເລກທີ 176/ນຍ

ນະຄອນຫຼວງວຽງຈັນ, ວັນທີ 04/06/26

# ດຳລັດ
# ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ
# ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ສະບັບເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015;
- ອີງຕາມ ກົດໝາຍ ວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ ສະບັບເລກທີ 25/ສພຊ, ລົງວັນທີ 12 ພຶດສະພາ 2017;
- ອີງຕາມ ໜັງສືສະເໜີ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ສະບັບເລກທີ 003/ຄຄອຊ, ລົງວັນທີ 19 ພຶດສະພາ 2026.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ໃນການຄົ້ນຄວ້າ, ປະສານງານ, ຕິດຕາມ, ຄຸ້ມຄອງ, ກວດການ, ຕອບຕ້ານ ແລະ ຊຸກຍູ້ສົ່ງເສີມ ກ່ຽວກັບວຽກງານອິນເຕີເນັດ, ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ, ເນື້ອໃນຂໍ້ມູນຂ່າວສານຜ່ານອິນເຕີເນັດ, ຄວາມປອດໄພດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ, ຊຶ່ງຕໍ່ໄປນີ້ຈະເອີ້ນວ່າ "ວຽກງານອິນເຕີເນັດ" ໃຫ້ມີຄວາມຮັບປະກັນ ຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ຂຽນເປັນອັກສອນຫຍໍ້ວ່າ "ຄຄອຊ" ຂຽນເປັນພາສາອັງກິດ "Lao National Internet Committee-LNIC" ແມ່ນການຈັດຕັ້ງ ຂອງລັດ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການຊ່ວຍລັດຖະບານ ໃນການຄົ້ນຄວ້າ, ຊີ້ນຳ ແລະ ປະສານງານກັບບັນດາກະຊວງ, ອົງການທຽບເທົ່າ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ສາກົນ ກ່ຽວກັບວຽກງານອິນເຕີເນັດ ແນໃສ່ປົກປ້ອງສິດຜົນປະໂຫຍດ ຂອງຊາດ, ຮັບປະກັນຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ແລະ ເພື່ອສະໜອງຂໍ້ມູນ ຂ່າວສານ ທີ່ເປັນປະໂຫຍດ ໃຫ້ແກ່ສັງຄົມ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ມີໜ້າທີ່ ດັ່ງນີ້:

1. ປະຕິບັດນິຕິກຳ ຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ ແລະ ລັດຖະບານ ວາງອອກຢ່າງເຂັ້ມງວດ;
2. ຊ່ວຍລັດຖະບານ ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ຮ່າງນະໂຍບາຍ, ວາງກົນໄກ, ແຜນຍຸດທະສາດ, ນິຕິກຳ, ແຜນດຳເນີນງານ ແລະ ແຜນພັດທະນາວຽກງານອິນເຕີເນັດ, ພື້ນຖານໂຄງລ່າງຂໍ້ມູນຂ່າວສານ, ລະບົບສາຍສົ່ງໂທລະຄົມມະນາຄົມ, ລະບຽບການເຄື່ອນໄຫວ ແລະ ມາດຕະການແກ້ໄຂຕ່າງໆ ຕາມການມອບໝາຍ ເພື່ອສະເໜີ ຕໍ່ລັດຖະບານ ພິຈາລະນາອະນຸມັດ;
3. ຊ່ວຍລັດຖະບານ ຄົ້ນຄວ້າຫັນເອົານະໂຍບາຍ, ຍຸດທະສາດ, ແຜນງານ ແລະ ມະຕິຕົກລົງ ຂອງລັດຖະບານ ກ່ຽວກັບວຽກງານອິນເຕີເນັດ ມາເປັນແຜນຍຸດທະສາດ, ແຜນງານ ແລະ ໂຄງການລະອຽດ ຂອງຕົນ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;
4. ຊ່ວຍລັດຖະບານ ຄົ້ນຄວ້າສົນທິສັນຍາ, ສັນຍາ, ອະນຸສັນຍາ ແລະ ຖະແຫຼງການ ແລະ ເອກະສານອື່ນ ຂອງສາກົນ ທີ່ກ່ຽວກັບວຽກງານອິນເຕີເນັດ ເພື່ອນຳສະເໜີລັດຖະບານ ພິຈາລະນາລົງນາມ, ຮັບຮອງ, ໃຫ້ສັດຕະຍາບັນ, ເຂົ້າເປັນພາຄີ, ຖອນຕົວ ຫຼື ຍົກເລີກ;
5. ຊີ້ນຳບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງລັດ ແລະ ເອກະຊົນ ກ່ຽວກັບວຽກງານອິນເຕີເນັດ ເພື່ອກຳນົດມາດຕະຖານ, ເງື່ອນໄຂ, ການບໍລິການ ແລະ ວຽກງານອື່ນ ທີ່ກ່ຽວຂ້ອງກັບລະບົບອິນເຕີເນັດ ຂອງ ສປປ ລາວ ໃຫ້ເປັນຮູບປະທຳ ແລະ ມີປະສິດຕິພາບ;
6. ຊີ້ນຳວຽກງານຕອບຕ້ານ ແລະ ກ່າວຟ້ອງຂົ້ນສານ ໃນກໍລະນີມີການແຊກແຊງຈາກພາຍນອກ ແລະ ພາຍໃນ ຜ່ານລະບົບອິນເຕີເນັດ ເພື່ອຫວັງທຳລາຍມ້າງເພລະບອບການເມືອງ, ເສດຖະກິດ, ວັດທະນະທຳ ແລະ ສັງຄົມ ຊຶ່ງເຫັນວ່າ ແຕະຕ້ອງເຖິງຄວາມໝັ້ນຄົງ ຂອງ ສປປ ລາວ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງ ຫຼື ປັບປຸງກົນໄກ, ນະໂຍບາຍ ຫຼື ຈັດຕັ້ງປະຕິບັດນິຕິກຳທີ່ກ່ຽວຂ້ອງ ທີ່ເຫັນວ່າ ບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ຂອງ ສປປ ລາວ;
8. ພົວພັນ, ປຶກສາຫາລື ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ແລະ ອົງການຈັດຕັ້ງອື່ນໆ ລວມທັງບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອແລກປ່ຽນບົດຮຽນ ແລະ ຍາດແຍ່ງເອົາການຊ່ວຍເຫຼືອເຂົ້າໃນການພັດທະນາວຽກງານອິນເຕີເນັດ ລວມທັງວຽກງານຕອບຕ້ານໃນກໍລະນີທີ່ມີການແຊກແຊງ ຈາກພາຍນອກ ແລະ ພາຍໃນ ຜ່ານລະບົບອິນເຕີເນັດ;
9. ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ສະຫຼຸບລາຍງານ ແລະ ຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດຍຸດທະສາດ, ນິຕິກຳ, ແຜນດຳເນີນງານແຫ່ງຊາດ, ແຜນງານ ເພື່ອສົ່ງເສີມ ແລະ ພັດທະນາວຽກງານອິນເຕີເນັດ ເພື່ອສະເໜີ ລັດຖະບານ ພິຈາລະນາຮັບຮອງ ແລະ ລາຍງານອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ຕາມລະບຽບການ;
10. ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານອິນເຕີເນັດ ຕາມການອະນຸມັດ;
11. ສະຫຼຸບລາຍງານ ກ່ຽວກັບການເຄື່ອນໄຫວວຽກງານ ໃຫ້ລັດຖະບານ ແຕ່ລະໄລຍະ;
12. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ຄະນະກໍາມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ມີຂອບເຂດສິດ ດັ່ງນີ້:

1. ສະເໜີລັດຖະບານປັບປຸງ, ແກ້ໄຂ, ສ້າງ ຫຼື ຍຸບເລີກ ບັນດາກົນໄກ, ນະໂຍບາຍ, ແຜນຍຸດທະສາດ, ນິຕິກໍາ, ລະບຽບການເຄື່ອນໄຫວ ແລະ ມາດຕະການຕ່າງໆ ຂອງຄະນະກໍາມະການຄຸ້ມຄອງອິນເຕີເນັດແຫ່ງຊາດ;
2. ອອກຂໍ້ຕົກລົງ, ຄໍາແນະນໍາ, ແຈ້ງການ ແລະ ລະບຽບການ ກ່ຽວກັບວຽກງານອິນເຕີເນັດ ລວມທັງວຽກງານຕອບຕ້ານ ໃນກໍລະນີ ທີ່ມີການແຊກແຊງ ຈາກພາຍນອກ ແລະ ພາຍໃນ ຜ່ານລະບົບອິນເຕີເນັດ;
3. ຄົ້ນຄວ້າ ແລະ ປະກອບຄໍາເຫັນ ໃສ່ບັນດາ ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດ ທີ່ກ່ຽວພັນເຖິງການພັດທະນາວຽກງານອິນເຕີເນັດ;
4. ຄົ້ນຄວ້າ ແລະ ຊອກຫາແຫຼ່ງງົບປະມານ ພັດທະນາວຽກອິນເຕີເນັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
5. ຈັດກອງປະຊຸມສະໄໝສາມັນ ແລະ ວິສາມັນ ຂອງຄະນະກໍາມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ກ່ຽວກັບວຽກງານອິນເຕີເນັດ ຕາມການມອບໝາຍ ຂອງລັດຖະບານ;
6. ເຊີນຜູ້ຕາງໜ້າ ຂອງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ, ຊ່ຽວຊານ, ທີ່ປຶກສາ ຫຼື ຜູ້ຕາງໜ້າ ຂອງອົງການຈັດຕັ້ງອື່ນ ເຂົ້າຮ່ວມກອງປະຊຸມ ຂອງຄະນະກໍາມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ຕາມຄວາມເໝາະສົມ;
7. ແຕ່ງຕັ້ງອະນຸກໍາມະການວິຊາການຊ່ວຍວຽກສະເພາະດ້ານ ເມື່ອເຫັນວ່າ ມີຄວາມຈໍາເປັນ ພ້ອມທັງກໍານົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບ ຂອງແຕ່ລະອະນຸກໍາມະການຢ່າງຈະແຈ້ງ ຮັດກຸມ, ຫຼີກເວັ້ນການກ້າວກາຍ ຊໍ້າຊ້ອນ ວຽກງານ ຂອງພາກສ່ວນອື່ນ;
8. ສະເໜີປັບປຸງໂຄງປະກອບກົງຈັກການຈັດຕັ້ງ ແລະ ກອງເລຂາຊ່ວຍວຽກ ຂອງຄະນະກໍາມະການຄຸ້ມຄອງອິນເຕີເນັດແຫ່ງຊາດ;
9. ພົວພັນປະສານງານ, ຮ່ວມມືແລກປ່ຽນບົດຮຽນ ດ້ານວຽກງານອິນເຕີເນັດ ລວມທັງວຽກງານຕອບຕ້ານ ທີ່ມີການແຊກແຊງ ຈາກພາຍນອກ ແລະ ພາຍໃນ ຜ່ານລະບົບອິນເຕີເນັດກັບບັນດາຂະແໜງການ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ຕາມຄວາມເໝາະສົມ;
10. ຊອກຮູ້, ຄົ້ນຄວ້າບັນດາເປົ້າໝາຍຜູ້ນໍາໃຊ້ຂໍ້ມູນ ຂ່າວສານ ຜ່ານອິນເຕີເນັດ ຫຼື ສື່ສັງຄົມອອນລາຍຕ່າງໆ ທີ່ລະເມີດ ຕໍ່ ກົດໝາຍ, ລະບຽບການ, ແນວທາງນະໂຍບາຍຂອງພັກ ເພື່ອຊີ້ນໍາ ຫຼື ນໍາສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ຕອບໂຕ້, ຕອບຕ້ານ ແລະ ແກ້ໄຂ ຕາມຄວາມເໝາະສົມ;
11. ສະເໜີຍ້ອງຍໍ ແລະ ປະຕິບັດນະໂຍບາຍ ທີ່ເໝາະສົມ ຕໍ່ການຈັດຕັ້ງ, ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຜົນງານປະກອບສ່ວນ ເຂົ້າໃນການຄຸ້ມຄອງ ແລະ ພັດທະນາວຽກງານອິນເຕີເນັດ ລວມທັງວຽກງານຕອບຕ້ານ ທີ່ມີການແຊກແຊງ ຈາກພາຍນອກ ແລະ ພາຍໃນ ຜ່ານລະບົບອິນເນັດ;
12. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ຄະນະກໍາມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ມີກົງຈັກຊ່ວຍວຽກ ໂດຍຖືເອົາສູນອິນເຕີເນັດແຫ່ງຊາດ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນກອງເລຂາ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນປະທານ;
2. ທ່ານ ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຮອງປະທານ ແລະ ເປັນຜູ້ ປະຈຳການ;
3. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ;
4. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ ເປັນຮອງປະທານ;
5. ທ່ານ ຮອງລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຮອງປະທານ;
6. ທ່ານ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຮອງປະທານ;
7. ທ່ານ ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ເປັນຮອງປະທານ;
8. ທ່ານ ຮອງລັດຖະມົນຕີ ກະຊວງການຕ່າງປະເທດ ເປັນຮອງປະທານ;
9. ທ່ານ ຮອງລັດຖະມົນຕີ ກະຊວງການເງິນ ເປັນຮອງປະທານ;
10. ທ່ານ ຮອງຜູ້ວ່າທະນາຄານ ແຫ່ງ ສປປ ລາວ ເປັນຮອງປະທານ;
11. ທ່ານ ຮອງເລຂາຄະນະບໍລິຫານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຮອງປະທານ;
12. ທ່ານ ຫົວໜ້າກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
13. ທ່ານ ຮອງຫົວໜ້າກົມໃຫຍ່ສັນຕິບານ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
14. ທ່ານ ຮອງຫົວໜ້າກົມໃຫຍ່ເສນາທິການກອງທັບ ກະຊວງປ້ອງກັນປະເທດ ເປັນກຳມະການ;
15. ທ່ານ ຫົວໜ້າກົມສື່ສານ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
16. ທ່ານ ຫົວໜ້າກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
17. ທ່ານ ຫົວໜ້າກົມສື່ສານ ກະຊວງປ້ອງກັນປະເທດ ເປັນກຳມະການ;
18. ທ່ານ ຫົວໜ້າກົມປະຊາສຳພັນ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນກຳມະການ;
19. ທ່ານ ຫົວໜ້າກົມສື່ມວນຊົນ ຄະນະໂຄສະນາອົບຮົມສູນກາງພັກ ເປັນກຳມະການ;
20. ທ່ານ ຫົວໜ້າກົມຄວາມປອດໄພທາງໄຊເບີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນກຳມະການ;
21. ທ່ານ ຫົວໜ້າອົງການດັດສົມໂທລະຄົມ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນກຳມະການ;
22. ທ່ານ ຫົວໜ້າກົມຄື້ນຄວາມຖີ່ວິທະຍຸສື່ສານ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນກຳມະການ;
23. ທ່ານ ຫົວໜ້າຫ້ອງການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ;
24. ທ່ານ ຫົວໜ້າຫ້ອງການສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ;
25. ທ່ານ ຫົວໜ້າຫ້ອງການສູນກາງສະຫະພັນກຳມະບານລາວ ເປັນກຳມະການ;
26. ທ່ານ ຫົວໜ້າຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
27. ທ່ານ ຫົວໜ້າກົມການຂ່າວ ກະຊວງການຕ່າງປະເທດ ເປັນກຳມະການ;
28. ທ່ານ ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ ກະຊວງການເງິນ ເປັນກຳມະການ;
29. ທ່ານ ຫົວໜ້າກົມຊຳລະສະສາງ ທະນາຄານ ແຫ່ງ ສປປ ລາວ ເປັນກຳມະການ;
30. ທ່ານ ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ ທະນາຄານ ແຫ່ງ ສປປ ລາວ ເປັນກຳມະການ;
31. ທ່ານ ຫົວໜ້າກົມຕຳຫຼວດເສດຖະກິດ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;

32. ທ່ານ ຫົວໜ້າກົມໄອທີ (202) ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;

33. ທ່ານ ຫົວໜ້າຫ້ອງການບັນດາ ກະຊວງ, ອົງການທຽບລັດເທົ່າກະຊວງ, ອົງການຈັດຕັ້ງພັກ, ສະພາແຫ່ງຊາດ ເປັນກຳມະການ;

34. ທ່ານ ຫົວໜ້າຫ້ອງວ່າການປົກຄອງ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເປັນກຳມະການ;

35. ທ່ານ ຫົວໜ້າສູນອິນເຕີເນັດ ແຫ່ງຊາດ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນກຳມະການ, ທັງເປັນຫົວໜ້າກອງເລຂາ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະ ກ່ຽວກັບວຽກງານຂອງຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງສະມາຊິກ ໃນຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ;
3. ທຸກການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ແລະ ກິງຈັກຊ່ວຍວຽກແມ່ນອີງໃສ່ກົດໝາຍ, ລະບຽບການ, ຫຼັກການລວມ ຂອງລັດຖະບານ, ນຳເອົາແນວທາງນະໂຍບາຍ ຂອງພັກ-ລັດຖະບານ ມາຈັດຕັ້ງຜັນຂະຫຍາຍ ໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ;
2. ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ເຄື່ອນໄຫວວຽກງານແບບບໍ່ປະຈຳການ, ຖືເອົາລະບອບປະຊຸມ 06 ເດືອນ, ປະຈຳປີ ແລະ ກອງປະຊຸມວິຊາການ ແຕ່ລະໄລຍະເປັນການເຄື່ອນໄຫວວຽກງານເພື່ອເປັນການຕິດຕາມ, ຄຸ້ມຄອງ, ກວດກາ, ຕອບຕ້ານ, ຊຸກຍູ້ສົ່ງເສີມ, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ, ວາງທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ ພ້ອມທັງລາຍງານໃຫ້ລັດຖະບານ ຢ່າງເປັນປົກກະຕິ.

   ການດຳເນີນກອງປະຊຸມແຕ່ລະຄັ້ງ ຕ້ອງປະກອບດ້ວຍບຸກຄະລາກອນໃນຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ບໍ່ຕ່ຳກວ່າໜຶ່ງສ່ວນສອງ ຈຶ່ງຈະສາມາດເປີດກອງປະຊຸມໄດ້. ໃນກໍລະນີຈຳເປັນ ແລະ ຮີບດ່ວນ ສາມາດເປີດກອງປະຊຸມວິສາມັນ ຂອງຄະນະຂຶ້ນ;
3. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແນ່ໃສ່ໜູນໃຊ້ກຳລັງແຮງ ຂອງທຸກພາກສ່ວນ ເພື່ອພັດທະນາວຽກງານອິນເຕີເນັດລວມທັງວຽກງານຕອບຕ້ານ ໃນກໍລະນີທີ່ມີການແຊກແຊງ ຈາກພາຍນອກ ແລະ ພາຍໃນ ຜ່ານລະບົບອິນເຕີເນັດ ໃຫ້ດີຂຶ້ນ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງ ຕາມລະບຽບການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ມີງົບປະມານ ແລະ ກາປະທັບເປັນ ຂອງຕົນເອງ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ໂດຍປະຕິບັດ ຕາມລະບຽບການ ຂອງລັດ.

ງົບປະມານຮັບໃຊ້ສຳລັບການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ແມ່ນຂຶ້ນກັບງົບປະມານປະຈຳປີ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍມີແຫຼ່ງທີ່ມາຈາກ ງົບປະມານ ຂອງລັດ, ເງິນຊ່ວຍເຫຼືອຈາກການຮ່ວມມື ຂອງບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ, ການປະກອບສ່ວນ ຂອງພາກເອກະຊົນ ແລະ ອົງການຈັດຕັ້ງອື່ນ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ປະທານຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ເປັນຜູ້ແບ່ງຄວາມຮັບຜິດຊອບໃຫ້ ແກ່ຮອງປະທານ ແລະ ກຳມະການ ແຕ່ລະທ່ານ ໃຫ້ລະອຽດ, ຈະແຈ້ງ, ຮັດກຸມ, ເໝາະສົມ ແລະ ສາມາດຈັດຕັ້ງປະຕິບັດໄດ້.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ສະບັບເລກທີ 559/ນຍ, ລົງວັນທີ 31 ທັນວາ 2018.

**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**